# ເປັນຫຍັງຕ້ອງສັກຢາວັກຊີນ?



ວັກຊີນໂຄວິດ-19 ແມ່ນມີຄວາມປອດໄພ ແລະ ມີປະສິດທິພາບ. ໃນຂະນະທີ່ບາງຄົນຍັງຄົງເປັນ ໂຄວິດ-19 ພາຍຫຼັງທີ່ຮັບວັກຊີນ, ມັນຊ່ວຍປ້ອງກັນ ທ່ານຈາກອາການປ່ວຍຂັ້ນຮຸນແຮງ ຫຼື ເຖິງຂັ້ນເຂົ້າ ໂຮງໝໍຖ້າທ່ານເປັນໂຄວິດ-19.

ການສັກຢາວັກຊີນເພື່ອຫຼຸດ ຜ່ອນຄວາມສ່ຽງຂອງທ່ານ ໃນການຕິດເຊື້ອພະຍາດ ຫຼື ແຜ່ເຊື້ອໄວຣັສໃຫ້ຄົນ ອື່ນ. ນີ້ເປັນສິ່ງທີ່ສຳຄັນ ເພື່ອປ້ອງກັນຄົນທີ່ບໍ່ ສາມາດ ສັກຢາວັກຊີນ ໄດ້, ເຊັ່ນເດັກນ້ອຍ.





ນີ້ຍັງສາມາດຊ່ວຍໃຫ້ໂຮງໝໍມີ ຕຽງທີ່ພຽງພໍໃຫ້ກັບທຸກຄົນ ແລະ ຄົນທີ່ ຕ້ອງການການປິ່ນປົວສຸກເສີນໄດ້ທັນເວລາ.